ສຳນັກງານໃຫຍ່

ເລກທີ: 125 /ທຄຕລ.....2020.....

ນະຄອນຫຼວງວຽງຈັນ, ວັນທີ: 08 APR 2020

ແຈ້ງການ

ຮຽນ: ບັນດາທ່ານຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ນັກລົງທຶນ, ທີ່ນັບຖື.

ເລື່ອງ: ເລື່ອນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019.

- ອີງຕາມ ຄຳສັ່ງ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ເລກທີ 06/ນຍ, ລົງວັນທີ 29 ມີນາ 2020;
- ອີງຕາມມະຕິກອງປະຊຸມສະພາບໍລິຫານ ທຄຕລ ຄັ້ງວັນທີ 26 ມີນາ 2020;
- ອີງຕາມໜັງສືແຈ້ງຕອບເລື່ອງການເລື່ອນກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະບັບເລກທີ 0059/ສຄຄຊ, ລົງວັນທີ 03 ເມສາ 2020.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາທ່ານຜູ້ຖືຮຸ້ນຂອງ ທຄຕລ ແລະ ນັກລົງທຶນ ຊາບທົ່ວເຖິງກັນວ່າ ທຄຕລ ໄດ້ເລື່ອນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019 (ກອງປະຊຸມ) ເຊິ່ງມີກຳນົດເປີດປະຊຸມໃນວັນທີ 30 ເມສາ 2020 ອອກໄປໂດຍບໍ່ມີກຳນົດ ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດ COVID-19 ຢູ່ໃນ ສປປ ລາວ ກໍ່ຄື ຢູ່ບັນດາປະເທດໃນພາກພື້ນ ແລະ ສາກົນ. ສະນັ້ນ ເພື່ອຮັບປະກັນສຸຂະພາບຂອງບັນດາຜູ້ຖືຮຸ້ນ ແລະ ທຸກຄົນທີ່ກ່ຽວຂ້ອງໃນການຈັດກອງປະຊຸມ ກໍ່ຄື ເພື່ອປະຕິບັດຕາມມາດຕະການປ້ອງກັນພະຍາດນີ້ທີ່ລັດຖະບານໄດ້ວາງອອກ ທຄຕລ ຈຶ່ງມີຄວາມຈຳເປັນເລື່ອນກອງປະຊຸມອອກໄປ. ສຳລັບມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເພື່ອເຂົ້າຮ່ວມກອງປະຊຸມ ແລະ ຮັບເງິນປັນຜົນ ແມ່ນຍັງຮັກສາໄວ້ຕາມເດີມ. ການເລື່ອນກອງປະຊຸມດັ່ງກ່າວ ໄດ້ຮັບອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງສອດຄ່ອງຕາມລະບຽບແລ້ວ ແລະ ຈະບໍ່ມີຜົນກະທົບໃດໆຕໍ່ສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມ.

ທຄຕລ ຈະສືບຕໍ່ຕິດຕາມ ແລະ ປະເມີນສະຖາ ນະການແຜ່ລະບາດຂອງພະຍາດ COVID-19 ເປັນແຕ່ລະໄລຍະ. ຖ້າຫາກສະຖານະການກັບສູ່ສະພາວະປົກກະຕິແລ້ວ ທຄຕລ ຈະພິຈາລະນາກຳນົດວັນ-ເວລາ ແລະ ສະຖານທີ່ປະຊຸມຜູ້ຖືຮຸ້ນປະຈຳປີ 2019 ຄືນໃໝ່ ແລະ ຈະແຈ້ງໃຫ້ບັນດາຜູ້ຖືຮຸ້ນຂອງ ທຄຕລ ຮັບຊາບໂດຍໄວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ຂໍອະໄພມາໃນໂອກາດນີ້ດ້ວຍ.

ຜູ້ອຳນວຍການໃຫຍ່
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຊົງ ຈັນທະຈັກ